# ໂຮງຮຽນວັນອາທິດ

**ວັນອາທິດ ທີ29 ເດືອນພຶສຈິກາ 2020 (11-29-2020)**

---

## ມຸ້ງໝັ້ນທີ່ພາລະກິດຂອງພຣະອົງ.

ທ່ານຈະມີປະຕິກິຣິຍາຕອບສນອງຢ່າງໃດເມື່ອທ່ານສູນເສັຽບາງສິ່ງບາງຢ່າງ?

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າປາຖນາຢາກໃຫ້ທຸກຄົນໄດ້ຍິນແລະໂຕ້ຕອບຕໍ່ຂ່າວປະເສີດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທຸກໆປີ, ໄດ້ມີຫຼາຍພັນຄົນຫຼົງຫາຍໄປຫຼືຖືກບາດເຈັບໃນສວນສາທາຣະນະແຫ່ງຊາດຂອງພວກເຮົາ. ໃນປີ 2017 ເທົ່ານັ້ນ, ມີເຫດການໆຄົ້ນຫາແລະກູ້ພັຍ 4,194 ເຫດການ. ໃນທາງການບໍຣິການສວນສາທາຣະນະແຫ່ງຊາດນີ້ໄດ້ມີການຝຶກອົບຮົມພະນັກງານເພື່ອນຳພາການຄົ້ນຫາການກູ້ພັຍເຫຼົ່ານີ້, ແຕ່ໂດຍທັມມະຊາດແລ້ວກໍ່ມີເພື່ອນໆແລະຜູ້ເປັນທີ່ຮັກຕ້ອງການຄວາມຊ່ວຍເຫຼືອ. ເຫດຜົນແມ່ນຈະແຈ້ງ: ບາງຄົນທີ່ພວກເຂົາຮັກຫ່ວງໃຍໄດ້ຫຼົງຫາຍໄປ. ພວກເຮົາປາຖນາທີ່ຈະຊ່ວຍເທົ່າທີ່ພວກເຮົາຈະຊ່ວຍໄດ້ຕໍ່ບຸກຄົນທີ່ພວກເຮົາຮັກທີ່ໄດ້ສູນເສັຽທາງດ້ານຮ່າງກາຍ, ແຕ່ພຣະເຈົ້າມີຄວາມປາຖນາຫຼາຍກ່ວານັ້ນອີກສຳລັບຜູ້ທີ່ສູນເສັຽທາງດ້ານຈິດວິນຍານ. ຜ່ານການສຳຫຼວດໄດ້ຮູ້ວ່າມີປະຊາກອນຫຼາຍກ່ວາສອງສ່ວນສາມຂອງໂລກແມ່ນບໍ່ຮູ້ຈັກພຣະຄຣິດແລະມີຄວາມຕ້ອງການ "ຄົ້ນຫາທາງຈິດວິນຍານແລະການຊ່ວຍເຫຼືອ." ວິທີນຶ່ງທີ່ພວກເຮົາຈະສະທ້ອນເຖິງຄວາມດຸໝັ້ນຂອງພວກເຮົາຕໍ່ພຣະຄຣິດແມ່ນໂດຍການແບ່ງປັນຄວາມຕັ້ງໃຈແລະຄວາມປາຖນາຂອງພຣະອົງທີ່ຈະເຂົ້າຫາຜູ້ທີ່ຍັງບໍ່ມີຄວາມສຳພັນກັບພຣະອົງ. ການມີຄວາມຕັ້ງໃຈຕໍ່ພັນທະກິດຂອງພຣະເຈົ້າໝາຍຄວາມວ່າພວກເຮົາແຕ່ລະຄົນເຫັນວຽກງານອັນຍິ່ງໃຫ່ຽນີ້ເປັນໜ້າທີ່ຮັບຜິດຊອບສ່ວນຕົວຂອງພວກເຮົາເອງແຕ່ລະຄົນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ໂຣມ 10:9-10.

*9 ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າພຣະເຈົ້າ*
*ໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ. 10 ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອ*
*ດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກຈຶ່ງຖືກຊົງໂຜດໃຫ້ພົ້ນ.*

ໂຣມ 10:9-10 ໃຫ້ຄຳອະທິບາຍສັ້ນໆກ່ຽວກັບຂ່າວປະເສີດ-ແລະມັນບໍ່ແມ່ນເສັ້ນທາງສູ່ຄວາມສຳພັນກັບພຣະເຈົ້າທີ່ຖືກສິ່ງເສີມໃນສາສນາອື່ນໄດ້ສິ່ງເສີມແລະແບບມຸມມອງຂອງໂລກ. ແນວໂນ້ມຂອງມະນຸດຂອງພວກເຮົາແມ່ນຄິດວ່າພວກເຮົາຕ້ອງເຮັດບາງສິ່ງບາງຢ່າງເພື່ອໃຫ້ໄດ້ມາແຫ່ງຄວາມລອດ, ແລະແນ່ນອນວ່າພຣະເຈົ້າຈະໃຫ້ໄດ້ຮັບສິ່ງນັ້ນ. ພຣະອົງສາມາດອອກແບບສິ່ງຕ່າງໆເພື່ອວ່າພວກເຮົາຈະຕ້ອງຕິດຕາມລາຍການແລະສິ່ງທີ່ບໍ່ຄວນເຮັດເພື່ອຈະມີຄວາມສຳພັນກັບພຣະອົງ. ແຕ່ພຣະເຈົ້າບໍ່ໄດ້ເຮັດແບບນັ້ນດ້ວຍເຫດຜົນນຶ່ງທີ່ງ່າຍດາຍ. ພຣະອົງຮູ້ວ່າພວກເຮົາເຮັດບໍ່ໄດ້. ພຣະອົງຮູ້ວ່າພວກເຮົາບໍ່ສາມາດເຊື່ອຟັງແລະປະຕິບັດຕາມກົດບັນຍັດທັງໝົດ, ສະນັ້ນພຣະເຈົ້າຈຶ່ງໄດ້ສົ່ງພຣະບຸດຂອງພຣະອົງ, ພຣະເຢຊູ. ພຣະເຢຊູເຂົ້າມາໃນໂລກນີ້ແລະເຮັດໃນສິ່ງທີ່ພວກເຮົາບໍ່ສາມາດເຮັດໄດ້. ພຣະອົງມີຊີວິດທີ່ສົມບູນແບບໃນການເຊື່ອຟັງພຣະເຈົ້າທີ່ພວກເຮົາບໍ່ສາມາດເຮັດໄດ້. ການເຊື່ອຟັງຂອງພຣະອົງແມ່ນສຳເຣັດສົມບູນຈົນວ່າພຣະອົງຍັງໄດ້ສະລະພຣະຊົນຂອງພຣະອົງເອງທີ່ເປັນການເສັຽສລະທີ່ສົມບູນແບບເພື່ອຈ່າຍຄ່າຄວາມຜິດບາບຂອງຄວາມບໍ່ເຊື່ອຟັງຂອງພວກເຮົາ.

ຂໍ້ພຣະຄັມພີນີ້ເຮັດໃຫ້ຊີວິດຄຣິສຕຽນເກີດສິ່ງນຶ່ງຂຶ້ນ: ຄືຄວາມເຊື່ອ. ທ່ານໂປໂລໄດ້ໃຊ້ຄຳກິຣິຍາສອງຄຳໃນການຂຽນກ່ຽວກັບເຣື່ອງນີ້, ແຕ່ສອງຢ່າງນີ້ເປັນເໝືອນເງິນຫຼຽນນຶ່ງທີ່ມີສອງດ້ານ.

- **ສາຣະພາບ.** "ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ" ແມ່ນການສາຣະພາບຍອມຮັບຂອງຄຣິສຕຽນລຸ້ນທຳອິດ ແລະສາມຄຳນີ້ມີຄວາມໝາຍຫຼາຍຢ່າງ. ອົງພຣະຜູ້ເປັນເຈົ້າ ຄຳນີ້ແມ່ນຄຳດຽວກັນໃນພາສາກຣີກທີ່ຊາວຢິວເຄີຍໃຊ້ເພື່ອອ້າງອີງເຖິງພຣະເຈົ້າ. ຄຳອ້າງອີງນີ້ເປັນການສະແດງເຖິງການຍອມຮັບວ່າພຣະເຢຊູແຫ່ງນາຊາເຣັດແມ່ນພຣະເຈົ້າອົງສົມບູນ.

ພວກເຮົາຈະຮູ້ໄດ້ແນວໃດວ່າພຣະເຢຊູເປັນພຣະເຈົ້າ? ພວກເຮົາເບິ່ງຊີວິດຂອງພຣະອົງ. ພຣະອົງບໍ່ໄດ້ສິດສອນຄືກັນກັບຄົນອື່ນ, ແລະສິ່ງມະຫັສຈັນທີ່ພຣະອົງໄດ້ເຮັດໄດ້ໃຫ້ຄວາມເຊື່ອຖືແລະສິດທິອຳນາດຕໍ່ສິ່ງທີ່ພຣະອົງກ່າວ. ພຣະເຢຊູກ່າວວ່າ ພຣະອົງເປັນທາງດຽວທີ່ຈະໄປເຖິງພຣະເຈົ້າ (ໂຢຮັນ 14:6) ແລະຍັງເວົ້າວ່າ "ເຮົາກັບພຣະບິດາກໍເປັນອັນນຶ່ງອັນດຽວກັນ" (ໂຢຮັນ 10:30). ແລະຫຼັງຈາກນັ້ນກໍຄືການຟື້ນຄືນພຣະຊົນ! ທາງແຫ່ງພຣະຄຣິດແມ່ນຈຸດໃຈກາງຂອງເຫດການສຳຄັນນີ້, ໃນຊ່ວງເວລາທີ່ພຣະເຈົ້າໄດ້ດົນບັນດານໃຫ້ພຣະເຢຊູເປັນຄືນມາຈາກຕາຍ. ດ້ວຍເຫດການທີ່ໂດດເດັ່ນນີ້, ພຣະເຈົ້າພຣະບິດາໄດ້ຢືນຢັນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ.

- **ເຊື່ອ.** ການສາຣະພາບຂອງພວກເຮົາແມ່ນການສະແດງອອກພາຍນອກຂອງຄວາມເຊື່ອຂອງພວກເຮົາທີ່ວ່າພຣະເຢຊູແມ່ນໃຜ: ພຣະຜູ້ໂຜດໃຫ້ພົ້ນທີ່ຟື້ນຄືນພຣະຊົນແລະອົງພຣະຜູ້ເປັນເຈົ້າ, ພຣະບຸດຂອງພຣະເຈົ້າ.

ການສາຣະພາບແລະການເຊື່ອບໍ່ແມ່ນບາດກ້າວນຶ່ງແລະສອງສຳລັບຄວາມລອດພົ້ນ. ຄວາມຈິງ, ຄຳສັ່ງຂອງສອງຢ່າງນີ້ໃນຂໍ້ 9 ແລະຂໍ້ 10. ທັງສອງຂໍ້ນີ້ໄປນຳກັນ. ສິ່ງທີ່ພວກເຮົາເຊື່ອໃນນັ້ນພວກເຮົາຈະສາຣະພາບຢ່າງເປີດເຜີຍ. ບົດບາດທ່າທີຂອງພວກເຮົາໃນຄວາມລອດແມ່ນເໝືອນວ່າງ່າຍໆ. ນັ້ນແມ່ນເຫດຜົນທີ່ຂໍ້ຄວາມນີ້ຖືກເອີ້ນວ່າຂ່າວປະເສີດ-ຂ່າວດີ-ຂອງພຣະເຢຊູຄຣິດ. ພວກເຮົາບໍ່ມີຂ່າວດີທັງງທີ່ຍິ່ງໃຫຍ່ໄປກ່ວາຄວາມຈິງທີ່ວ່າພຣະເຢຊູເຮັດໃຫ້ຄວາມລອດຂອງພວກເຮົາເປັນໄປໄດ້ໃນຄວາມບາບຂອງພວກເຮົາ. ສິ່ງທີ່ຍັງເຫຼືອແມ່ນສຳລັບພວກເຮົາທີ່ຈະຮັບຮູ້ຄວາມຈິງນັ້ນແລະວາງໃຈເຊື່ອສັດທາໃນພຣະອົງ. "ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກຈຶ່ງຖືກຊົງໂຜດໃຫ້ພົ້ນ" (ຂໍ້ 10).

## 2. ໂຣມ 10:11-13.

*11 ເພາະຂໍ້ພຣະທັມຄັມພີກ່າວໄວ້ວ່າ, "ບຸກຄົນໃດທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ." 12 ເຫດວ່າພວກຢິວ, ແລະພວກຕ່າງຊາດນັ້ນພຣະເຈົ້າບໍ່ຊົງຖືວ່າຕ່າງກັນ ດ້ວຍວ່າອົງພຣະຜູ້ເປັນເຈົ້າອົງດຽວຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນທັງປວງແລະຊົງໂຜດຢ່າງບໍຣິບູນແກ່ຄົນທັງປວງທີ່ທູນຂໍຕໍ່ພຣະອົງ. 13 ເພາະວ່າ, "ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະໄດ້ພົ້ນ."*

ພວກວິຈານຄຣິສຕຽນກໍໄດ້ເຍາະເຍີ້ຍວ່າມັນມີຄວາມຄັບແຄບໂພດ: ພຣະເຢຊູເປັນທາງດຽວເທົ່ານັ້ນສຳລັບພຣະເຈົ້າ. ພວກເຮົາຮັບເອົາຄວາມຈິງນັ້ນກ່ຽວກັບພຣະເຢຊູ, ແຕ່ໃຫ້ພວກເຮົາຮັບເອົາຄວາມຈິງຢ່າງນຶ່ງຄື: ຄວາມກວມລວມທັງໝົດຂອງຂ່າວປະເສີດ. ຄວາມສຳພັນກັບພຣະເຈົ້າມີໄວ້ສຳລັບຜູ້ທີ່ໄວ້ວາງໃຈໃນພຣະຄຣິດເທົ່ານັ້ນ, ແຕ່ຄວາມສຳພັນດັ່ງກ່າວມານີ້ກໍແມ່ນເປີດໂອກາດໃຫ້ກັບທຸກຄົນແລະທຸກຄົນທີ່ໄວ້ວາງໃຈ!

ຕອນຕົ້ນໃນຈົດໝາຍສະບັບນີ້, ທ່ານໂປໂລໄດ້ໃຫ້ຄວາມຈິງແກ່ພວກເຮົາວ່າ: "ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ" (ໂຣມ 3:23). ຄົນບາບຕ້ອງການຄວາມລອດພົ້ນຂອງພຣະເຈົ້າ, ແລະເມື່ອທຸກຄົນໄດ້ເຮັດບາບ, ມັນຈຶ່ງເປັນຂໍ້ຕິດຕາມມາວ່າຄວາມລອດພົ້ນຂອງພຣະເຈົ້າແມ່ນມີໄວ້ໃຫ້ສຳລັບທຸກຄົນທີ່ກັບໃຈໃໝ່ແລະເຊື່ອ. ໂດຍການອ້າງເຖິງໂຢເອນ 2:32, ທ່ານໂປໂລບໍ່ສາມາດເຮັດໃຫ້ມັນແຈ່ມແຈ້ງຫຼາຍກ່ວານີ້: "ທຸກໆ

ຄົນທີ່ຮ້ອງອອກພຣະນາມຂອງພຣະຜູ້ເປັນເຈົ້າຈະໄດ້ລອດພົ້ນ." ເມື່ອໂຢເອນກ່າວຄຳພະຍາກອນເປັນຄັ້ງທຳອິດໃນສະຕະວັດທີເກົ້າກ່ອນ ຄ.ສ. ໃນຖານະເປັນປະຊາກອນທີ່ຊົງຖືກເລືອກຂອງພຣະເຈົ້າ, ພຣະເຈົ້າໄດ້ເອີ້ນຊາວຢິວວ່າເປັນ "ແສງສວ່າງຕໍ່ຊົນຊາດທັງຫຼາຍ" (ເອຊາຢາ 42:6). ຈາກຈຸດເລີ່ມຕົ້ນຂອງຄວາມສຳພັນແຫ່ງພັນທະສັນຍາຂອງພຣະເຈົ້າກັບອັບຣາມ, ພຣະອົງໄດ້ສັນຍາວ່າ, "ປະຊາຊາດທັງໝົດໃນໂລກຈະໄດ້ຮັບພອນໂດຍຜ່ານທາງເຈົ້າ" (ປຖມກ 12:3). ພອນນັ້ນໃນທີ່ສຸດໄດ້ມາໂດຍຜ່ານທາງພຣະເຢຊູຄຣິດ, ຜູ້ທີ່ນຳຄວາມລອດພົ້ນມາສູ່ຄົນທັງປວງ. ອານາຈັກຂອງພຣະເຈົ້າແມ່ນກົງກັນຂ້າມກັບອຳນາດການປົກຄອງຂອງໂລກນີ້ຫຼືສະໂມສອນໃດນຶ່ງ. ໃນການຈັດຕັ້ງເຫຼົ່ານັ້ນ, ຄົນທີ່ເປັນສະມາຊິກຢູ່ແລ້ວຈະຕັດສິນໃຈຮ່ວມກັນວ່າຄົນພາຍນອກແມ່ນສົມຄວນໄດ້ຮັບການຍອມຮັບຫຼືບໍ່. ຂອບຄຸນພຣະເຈົ້າ, ນັ້ນບໍ່ແມ່ນວິທີທີ່ພຣະເຈົ້າໄດ້ອອກແບບແຜນແຫ່ງຄວາມລອດພົ້ນຂອງພຣະອົງ. ພຣະເຈົ້າບໍ່ມີແຜນການແຫ່ງຄວາມລອດສຳລັບກຸ່ມນີ້ຢ່າງນຶ່ງແລະແຜນການສຳລັບກຸ່ມອື່ນອີກຢ່າງນຶ່ງ. ແທນທີ່ຈະເປັນດັ່ງນັ້ນ, ທຸກໆຄົນແລະທຸກໆຊາດທີ່ຊອກຫາພຣະຄຣິດແລະຮ້ອງອອກພຣະນາມພຣະອົງກໍຈະໄດ້ຮັບຊີວິດນິຣັນ.

- ຂ່າວປະເສີດແມ່ນສຳລັບຄົນທີ່ເຮົາມັກແລະຄົນທີ່ເຮົາບໍ່ມັກ.
- ຂ່າວປະເສີດແມ່ນສຳລັບຄົນທີ່ເປັນໝູ່ເພື່ອນແລະເປັນສັດຕຣູຂອງພວກເຮົາ.
- ຂ່າວປະເສີດນີ້ແມ່ນສຳລັບຄົນທີ່ພວກເຮົາຢາກໃຫ້ກາຍມາເປັນຜູ້ເຊື່ອແລະສຳລັບຄົນທີ່ພວກເຮົາຄິດບໍ່ເຖິງວ່າພວກເຂົາຈະສົມຄວນໄດ້ຮັບຄວາມລອດພົ້ນ.

ຂ່າວດີຂອງພຣະຄຣິດແມ່ນສຳລັບທຸກຄົນ! ສະນັ້ນ, ພວກເຮົາຄວນອະທິຖານຢ່າງຈິງຈັງສຳລັບເຈົ້ານາຍທີ່ເຮັດບໍ່ດີຕໍ່ພວກເຮົາຄືກັບທີ່ພວກເຮົາເຮັດກັບໝູ່ເພື່ອນທີ່ພວກເຮົາຮັກແພງ. ພວກເຮົາຄວນມີຄວາມປາຖະນາເຖິງຄວາມລອດພົ້ນຂອງຄົນອື່ນແລະຄວາມເຊື່ອຂອງຄົນອື່ນຄືກັນກັບພວກເຮົາເຮັດເພື່ອສະມາຊິກໃນຄອບຄົວ. ພວກເຮົາຄວນມຸ້ງໝັ້ນໃນພາລະກິດຂອງພຣະເຈົ້າເທົ່ານັ້ນເມື່ອພວກເຮົາມີຈິດໃຈດຽວກັນກັບຄົນຂອງພຣະເຈົ້າ. ນັ້ນແມ່ນ, ພຣະເຈົ້າ "ຢາກໃຫ້ທຸກຄົນໄດ້ຮັບຄວາມລອດພົ້ນແລະມາສູ່ຄວາມຮູ້ຈັກເຣື່ອງຄວາມຈິງ" (1 ຕີໂມທຽວ 4:4).

## 3.ໂຣມ 10:14-17.

*14 ແຕ່ຜູ້ທີ່ຍັງບໍ່ເຊື່ອໃນພຣະອົງນັ້ນ ເຂົາຈະທູນຂໍຕໍ່ພຣະອົງໄດ້ຢ່າງໃດ ແລະຜູ້ທີ່ຍັງບໍ່ໄດ້ຍິນເຖິງເຣື່ອງພຣະອົງນັ້ນຈະເຊື່ອໃນພຣະອົງໄດ້ຢ່າງໃດ.15 ແລະຖ້າບໍ່ມີໃຜໃຊ້ເຂົາໄປ ເຂົາຈະປະກາດໄດ້ຢ່າງໃດ ດັ່ງມີຄຳຂຽນໄວ້ໃນພຣະຄັມພີແລ້ວວ່າ, "ຕີນຂອງພວກຄົນນຳຂ່າວດີມາກໍງົດງາມປານໃດໜໍ." 16 ແຕ່ບໍ່ແມ່ນທຸກຄົນໄດ້ເຊື່ອຟັງຂ່າວປະເສີດນັ້ນເພາະເອຊາຢາໄດ້ກ່າວໄວ້ວ່າ "ພຣະອົງເຈົ້າເອີຍ, ມີໃຜແດ່ໜໍໄດ້ເຊື່ອຟັງຕາມທີ່ເຂົາໄດ້ຍິນຈາກພວກເຮົານັ້ນ." 17ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື່ອງພຣະຄຣິດ.*

ພວກເຮົາໄດ້ສຸມໃຈໃສ່ໂອກາດກ່ອນທຸກຄົນທີ່ໄວ້ວາງໃຈໃນຂ່າວດີຂອງພຣະຄຣິດ, ແຕ່ໃຫ້ພວກເຮົາໄດ້ເອົາໃຈໃສ່ດຽວນີ້ກ່ຽວກັບຄວາມຮັບຜິດຊອບຂອງພວກເຮົາຕໍ່ເຣື່ອງນີ້.

ການມີຄວາມມຸ້ງໝັ້ນຕໍ່ພາຣະກິດຂອງພຣະເຈົ້າໝາຍຄວາມວ່າພວກເຮົາຈະຕ້ອງມີຄວາມມຸ້ງໝັ້ນທີ່ຈະແບ່ງປັນພາຣະກິດຂອງພຣະເຈົ້າ. ມີປະໂຫຽກທີ່ນິຍົມເວົ້າກັນວ່າ, "ປະກາດຂ່າວປະເສີດຕລອດເວລາ. ເມື່ອຈຳເປັນ, ໃຫ້ໃຊ້ຄຳນີ້." ແນ່ນອນວ່າພວກເຮົາຄວນດຳເນີນຊີວິດໃນແບບທີ່ພວກເຮົາດຳເນີນຊີວິດ. ພຣະເຢຊູໄດ້ກ່າວວ່າ, "ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງ ເພື່ອວ່າ ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ." (ມັດທາຍ 5:16). ແຕ່ຄຳເວົ້າທີ່ສລາດນີ້ຂາດຄວາມຈິງທີ່ສຳຄັນອັນນຶ່ງ; ການເວົ້າເຣື່ອງຂ່າວປະເສີດບໍ່ແມ່ນທາງເລືອກ. ມັນເປັນສິ່ງຈຳເປັນຕ້ອງໃຊ້ຄຳເວົ້າ.

ທ່ານໂປໂລໄດ້ເຊື່ອມໂຍງໃຫ້ເຫັນໂດຍກົງລະຫວ່າງຄົນທີ່ເອີ້ນອອກພຣະນາມຂອງອົງພຣະຜູ້ເປັນເຈົ້າເພື່ອຄວາມ

ລອດແລະຄວາມຈຳເປັນໃນການໄດ້ຍິນຂ່າວປະເສີດ. “ພວກເຂົາຈະເຊື່ອໄດ້ແນວໃດຖ້າບໍ່ໄດ້ຍິນເຣື່ອງຂອງພຣະອົງ?” (ຂໍ້14). ແລະເພື່ອໃຫ້ຄວາມກະຈ່າງແຈ້ງກ່ຽວກັບຈຸດນີ້ຂອງທ່ານ, ໂປໂລຖາມວ່າ, “ແລະພວກເຂົາຈະໄດ້ຍິນໂດຍທີ່ບໍ່ມີຜູ້ປະກາດຂ່າວປະເສີດໄດ້ແນວໃດ?” ການໄວ້ວາງໃຈໃນພຣະຄຣິດບໍ່ໄດ້ເກີດຂຶ້ນຕາມລົມໆແລ້ງໆ. ມັນຮຽກຮ້ອງໃຫ້ມີຜູ້ໃດຜູ້ນຶ່ງໄປປະກາດຂ່າວປະເສີດ. “ແລະພວກເຂົາຈະປະກາດໄດ້ແນວໃດເວັ້ນໄວ້ເສັຽແຕ່ວ່າພວກເຂົາຈະຖືກສົ່ງມາໃຫ້ປະກາດ?” (ຂໍ້ 15). ຖ້າບໍ່ດັ່ງນັ້ນພວກເຮົາອາດຄິດວ່າພວກເຮົາຍັງບໍ່ໄດ້ຖືກສົ່ງໄປບ່ອນໃດເທື່ອ, ຈົ່ງທົບທວນຄວາມຈຳເບິ່ງພຣະມະຫາບັນຊາທີ່ຍິ່ງໃຫ່ຽທີ່ພຣະເຢຊູໄດ້ມອບໃຫ້ໃນຕອນທ້າຍຂອງການປະຕິບັດຣາຊກິດຂອງພຣະອົງ. ພວກເຮົາໄດ້ຮັບຄຳບັນຊານັ້ນແລ້ວ. <u>ແມ່ນພຣະເຢຊູເອງໄດ້ສົ່ງພວກເຮົາໄປ;</u> ສະນັ້ນ, ພວກເຮົາຕ້ອງປະກາດຂ່າວປະເສີດຂອງພຣະຄຣິດຕໍ່ຜູ້ທີ່ພວກເຮົາພົບພໍ້ໃນຂນະທີ່ພວກເຮົາໄປ. ພວກເຮົາບໍ່ໄດ້ຮັບຜິດຊອບຕໍ່ວິທີທີ່ຄົນອື່ນຕອບສນອງຫຼືທ່າທີການຕອບຮັບຕໍ່ຂ່າວປະເສີດ; ພວກເຮົາຕ້ອງການພຽງແຕ່ຊື່ສັດຕໍ່ການເອີ້ນທີ່ຈະໄປບອກໄປເວົ້າ. ແຕ່ຖ້າພວກເຮົາບໍ່ກ້າວອອກໄປແລະບໍ່ຕັ້ງໃຈ, ພວກເຂົາກໍຈະບໍ່ມີໂອກາດຕອບສນອງຕໍ່ພຣະກິດຕິຄຸນຂ່າວປະເສີດໄດ້. ພວກເຮົາທຸກຄົນມີເວລາທີ່ຈະສ້າງຜົນປໂຍດໃຫ້ສຳລັບອານາຈັກຂອງພຣະເຈົ້າ. ຂໍໃຫ້ສວຍໂອກາດກ່ອນທີ່ພວກເຮົາຈະເຂົ້າຮ່ວມໃນການຕໍ່ສູ້ຜູ້ທີ່ພວກເຮົາຮູ້ວ່າວັນນຶ່ງເຂົາຈະຢືນຢູ່ຕໍ່ໜ້າຣາຊບັນລັງຂອງພຣະເຈົ້າ.

## <u>ການນຳໃຊ້ໃນຊີວິດ.</u>

ທ່ານຈະເຮັດຫັຽງເພື່ອໃຫ້ຄົນທັງຫຼາຍມີໂອກາດສຳພັດກັບຂ່າວປະເສີດ? ເລືອກຂໍ້ນຶ່ງຂອງການນຳໃຊ້ຕໍ່ລົງໄປນີ້.

- **ຈົ່ງຂຽນ.** ໃຊ້ເວລາໃນອາທິດນີ້ເພື່ອຂຽນຄຳພະຍານຂອງທ່ານ. ມີຄວາມຕັ້ງໃຈຕໍ່ພາຣະກິດຂອງພຣະເຈົ້າທີ່ຈະນຳເອົາຂ່າວປະເສີດໄປຫາຜູ້ທີ່ຍັງບໍ່ໄດ້ຍິນສິ່ງເຫຼົ່ານີ້ມັນຕ້ອງເລີ່ມຕົ້ນດ້ວຍຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບເຣື່ອງຂອງທ່ານແລະການເດີນໄປຂອງທ່ານກັບພຣະຄຣິດ.
- **ຈົ່ງແບ່ງປັນ.** ໃນອາທິດນີ້ໃຫ້ແບ່ງປັນຂ່າວປະເສີດກັບບາງຄົນ. ຈົ່ງອະທິຖານຕໍ່ພຣະວິນຍານບໍຣິສຸດໃຫ້ໂອກາດແກ່ທ່ານແລະຈາກນັ້ນໃຫ້ສັງເກດເບິ່ງປະຕູທີ່ເປີດອອກ. ໃນເວລານັ້ນພຣະວິນຍານບໍຣິສຸດເອງຈະຊ່ວຍທ່ານແບ່ງປັນເຣື່ອງຂອງທ່ານກ່ຽວກັບວິທີທີ່ພຣະເຢຊູປ່ຽນແປງຊີວິດຂອງທ່ານ.
- **ຈົ່ງໄປ.** ຈົ່ງອະທິຖານກ່ຽວກັບການເປັນພາກສ່ວນນຶ່ງຂອງພາຣະກິດຂອງພຣະເຈົ້າໃນທົ່ວໂລກ. ສຳລັບບາງຄົນໃນພວກທ່ານທີ່ອາດໝາຍເຖິງການທຳໜ້າທີ່ປະກາດເຜີຍແຜ່. ສຳລັບຄົນອື່ນໆທີ່ອາດໝາຍເຖິງບຸກຄົນທີ່ໃຫ້ການສນັບສນູນຜູ້ເປັນຄຣູສອນກ່ຽວເຣື່ອງພຣະກິດຕິຄຸນ. ການອະທິຖານແລະການສນັບສນູນຂອງທ່ານ. ຍັງມີອີກສິ່ງນຶ່ງທີ່ອາດຮູ້ສຶກເຖິງການຮຽກຮ້ອງເຖິງຕົວເຮົາເອງ. ຈົ່ງອະທິຖານຂໍໃຫ້ພຣະເຈົ້າໃຊ້ທ່ານ, ແລະທ່ານຈະມີຄວາມກ້າຫານທີ່ຈະຕອບການຊົງເອີ້ນຂອງພຣະເຈົ້າ.

ຫວັງວ່າທ່ານຈະບໍ່ປະເຊີນໜ້າກັບການຄົ້ນຫາແລະການຊ່ວຍກູ້ຊີວິດທີ່ມີສ່ວນກ່ຽວຂ້ອງກັບຄົນທີ່ຢູ່ໃກ້ທ່ານ. ແຕ່ພວກເຮົາທຸກຄົນຖືກບັນຊາໃຫ້ມີສ່ວນຮ່ວມໃນພາຣະກິດເພື່ອຄົ້ນຫາຜູ້ສູນຫາຍທາງຝ່າຍຈິດວິນຍານເພື່ອພວກເຮົາຈະສາມາດນຳພວກເຂົາເຂົ້າມາສູ່ພຣະຄຣິດ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.